ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 191 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 03 ມິຖຸນາ 2022

# ແຈ້ງການ

ເຖິງ: - ບັນດາກົມ ແລະ ທຽບເທົ່າກົມ ພາຍໃນ ທຫລ, ສາຂາ ທຫລ ປະຈຳພາກ, ທະນາຄານທຸລະກິດລັດ, ເອກະຊົນ ແລະ ສະຖາບັນການເງິນຈຸລະພາກ;

- ຜູ້ອຳນວຍການສະຖາບັນການສຶກສາ, ນັກຮຽນ, ນັກສຶກສາ, ປັນຍາຊົນ ແລະ ບັນດາທ່ານຜູ້ທີ່ມັກຮັກໃນການຂີດຂຽນ.

ເລື່ອງ: ປະກອບສ່ວນສົ່ງບົດຄວາມ, ບົດຄົ້ນຄວ້າ, ບົດວິໄຈ, ຂ່າວ ແລະ ການເຄື່ອນໄຫວຕ່າງໆ ເພື່ອລົງໃນວາລະສານ "ການທະນາຄານ".

- ອີງຕາມຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບວຽກງານວາລະສານການທະນາຄານ ສະບັບເລກທີ: 359/ທຫລ, ລົງວັນທີ 10 ພຶດສະພາ 2022.

ຫ້ອງການທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ວາລະສານ "ການທະນາຄານ (Bank Journal)" ເຊິ່ງເປັນວາລະສານສະບັບໄຕມາດ, ເລີ່ມຈັດພິມຕັ້ງແຕ່ປີ 2009 ເປັນຕົ້ນມາ ໃນໄລຍະຜ່ານມາໄດ້ມີບົດຫຼາຍປະເພດຈາກການປະກອບສ່ວນຢ່າງຕັ້ງໜ້າຂອງພະນັກງານໃນຂະແໜງການທະນາຄານ. ດັ່ງນັ້ນ, ເພື່ອເຮັດໃຫ້ວາລະສານການທະນາຄານສະບັບຕໍ່ໆໄປມີສີສັນຫຼາກຫຼາຍ ແລະ ມີສ່ວນຮ່ວມຈາກຜູ້ອ່ານຫຼາຍຂຶ້ນ; ຫ້ອງການ ທຫລ ຈຶ່ງຂໍແຈ້ງມາຍັງທ່ານເພື່ອສົ່ງບົດຄວາມ, ບົດຄົ້ນຄວ້າ, ບົດວິໄຈ, ຂ່າວ ແລະ ການເຄື່ອນໄຫວຕ່າງໆ ທີ່ຕິດພັນກັບວຽກງານຂະແໜງການທະນາຄານ, ເສດຖະກິດ, ການເງິນ-ເງິນຕາ, ວຽກງານແກ້ໄຂຄວາມທຸກຍາກຂອງປະຊາຊົນ, ບົດແປຈາກພາສາຕ່າງປະເທດ ແລະ ອື່ນໆ ປະກອບເຂົ້າໃນວາລະສານສະບັບຕໍ່ໆໄປ ເຊິ່ງບົດທີ່ໄດ້ຮັບການຄັດເລືອກລົງໃນວາລະສານຈະມີຄ່ານາມປາກກາໃຫ້ຕາມລະບຽບການ.

ບົດທີ່ນຳສົ່ງເຂົ້າມາກະລຸນາບອກຊື່ແຈ້ງຜູ້ຂຽນ ແລະ ນາມປາກກາ (ຖ້າມີ), ເບີໂທຕິດຕໍ່ ແລະ ບ່ອນສັງກັດໂດຍສົ່ງເປັນເອກະສານ ແລະ ຟາຍ ມາຍັງໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ. ຕົວອັກສອນທີ່ນຳໃຊ້ແມ່ນ Phetsarath OT, ຂະໜາດ 12, ຄວາມຍາວ 1, ໜ້າ A4 ຂຶ້ນໄປ ແລະ ພາບປະກອບ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະກອບສ່ວນກັບພວກເຮົາດ້ວຍ.

ຫົວໜ້າຫ້ອງການ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເພັດສະກາພອນ ແກ້ວວົງວິຈິດ

ຕິດຕໍ່ປະສານງານ: ທ່ານ ນ. ປາໃນ ພົມທະລາ, ໂທ 020 7898 1991

ທ່ານ ນ. ວັນປະເສີດ ສີມບຸນຍັນ, ໂທ 020 2327 5000